ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 114 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 04.07.2008

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງສາທາລະນະສຸກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວສະບັບ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 410/ ກຊສ, ລົງວັນທີ 16 ມິຖຸນາ 2008;
- ອີງຕາມ ການສະເໜີ ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະກຳມະການ ປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 82 /ຫປຄ, ລົງວັນທີ 30 ມິຖຸນາ 2008.

### ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງກະຊວງສາທາລະນະສຸກ. ເພື່ອເປັນບ່ອນອີງໃນດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ແນໃສ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານສາທາລະນະສຸກແຫ່ງຊາດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງສາທາລະນະສຸກ ຊຽນຫຍໍ້ " ກຊສ " ແມ່ນອົງການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງ ໃນໂຄງປະກອບກົງຈັກຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກດ້ານສາທາລະນະສຸກໃນຂອບເຂດທົ່ວປະເທດ ແລະ ຊີ້ນຳການກໍ່ສ້າງ ແລະ ບຳລຸງສ້າງບຸກຄະລາກອນດ້ານສາທາລະນະສຸກ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່ ຂອງ ກະຊວງສາທາລະນະສຸກ**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ, ລັດຖະດຳລັດປະທານປະເທດ;
2. ຄົ້ນຄວ້າຮ່າງນະໂຍບາຍ ແລະ ແຜນຍຸດທະສາດດ້ານສາທາລະນະສຸກ ເພື່ອສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ;
3. ຄົ້ນຄວ້າຫັນເອົານະໂຍບາຍ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ມາເປັນນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການພັດທະນາສາທາລະນະສຸກລະອຽດໃນແຕ່ລະໄລຍະ. ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງໃນຂອບເຂດທົ່ວປະເທດ;
4. ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດຕໍ່ລັດຖະບານ; ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງສາທາລະນະສຸກ ພ້ອມທັງຕິດຕາມກວດກາການປະຕິບັດລະບຽບກົດໝາຍທີ່ວາງອອກ;
5. ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດແຜນການ, ວຽກງານຂະແໜງການຂອງຕົນ ແລ້ວລາຍງານຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ; ວິໄຈລະບົບສາທາລະນະສຸກໃຫ້ເຫັນຜົນກະທົບທາງດ້ານຕັ້ງໜ້າ ເພື່ອສົ່ງເສີມ ແລະ ດ້ານຫຍໍ້ທໍ້ເພື່ອດັດແປງແກ້ໄຂໃຫ້ທັນເວລາ. ສັງລວມຂໍ້ມູນສະຖິຕິດ້ານສາທາລະນະສຸກ ແລະ ການແພດເພື່ອປະກາດໃຊ້ເປັນທາງການ;
6. ສ້າງ ແລະ ປັບປຸງຕາໜ່າງສາທາລະນະສຸກໃນຂອບເຂດທົ່ວປະເທດ, ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງການປະຕິບັດວຽກງານ ແລະ ບຸກຄະລາກອນຂອງຂະແໜງການຕົນ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;
7. ສົ່ງເສີມການຄົ້ນຄ້ວາ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານສາທາລະນະສຸກ ແລະ ເຕັກໂນໂລຊີຂອງພາຍໃນແລະຕ່າງປະເທດ ເພື່ອເປັນພື້ນຖານຊຸກຍູ້ ວຽກງານສົ່ງເສີມສຸຂະພາບ, ອະນາໄມກັນພະຍາດ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການໃຫ້ສຸຂະພາບຂອງປະຊາຊົນລາວດີຂື້ນຢ່າງບໍ່ຢຸດຢັ້ງ;
8. ຊຸກຍູ້ ແລະ ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກໃຫ້ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຕາມລະບົບສາຍຕັ້ງ ລວມທັງຫົວໜ່ວຍບໍລິຫານ ແລະ ບໍລິການດ້ານການແພດ, ການຢາທັງຂອງລັດ ແລະ ເອກະຊົນ ໃຫ້ປະຕິບັດພາລະໜ້າທີ່ຂອງຕົນຢ່າງຖືກຕ້ອງຕາມລະບຽບກົດໝາຍ;

9. ຕິດຕາມ ແລະ ກວດກາບັນດາອົງການຈັດຕັ້ງສາທາລະນະສຸກຢູ່ທຸກໆຂັ້ນ ກ່ຽວກັບປະສິດທິພາບຂອງການປະຕິບັດງານ, ໃນການຄຸ້ມຄອງງົບປະມານ, ການຄຸ້ມຄອງພື້ນຖານວັດຖຸເຕັກນິກ, ການນຳໃຊ້ແຮງງານ ແລະ ບັນຫາອື່ນໆ ບົນພື້ນຖານລະບຽບກົດໝາຍ ແລະ ກຳນົດໝາຍເສດຖະກິດເຕັກນິກທີ່ລັດຖະບານວາງອອກ;
10. ສຶກສາອົບຮົມ, ກໍ່ສ້າງ, ບຳລຸງສ້າງ, ສັບຊ້ອນ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານຢ່າງຖືກຕ້ອງ ຕາມນະໂຍບາຍທີ່ພັກ ແລະ ລັດຖະບານໄດ້ປະກາດໃຊ້;
11. ຄົ້ນຄ້ວາ ແລະ ປະກາດໃຊ້ລະບອບແບບແຜນວິທີເຮັດວຽກຂອງກະຊວງ, ລະບຽບການຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງຂະແໜງສາທາລະນະສຸກ;
12. ຕິດຕໍ່ພົວພັນກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອ ແລະ ການຮ່ວມມື ມາສະໜັບສະໜູນການພັດທະນາ ຂະແໜງການສາທາລະນະສຸກ ບົນພື້ນຖານຫຼັກການ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ;
13. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

1. ສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ການຈັດຕັ້ງຂັ້ນຕ່າງໆ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງກະຊວງສາທາລະນະສຸກ;
2. ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ, ໃສ່ວິໄນ ແລະ ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານຂັ້ນຕ່າງໆທີ່ຕົນຄຸ້ມຄອງ; ສຳລັບກໍລະນີຢູ່ທ້ອງຖິ່ນ ຕ້ອງປຶກສາຫາລືຄວາມເປັນເອກະພາບກັບອົງການປົກຄອງທ້ອງຖິ່ນເສຍກ່ອນ;
3. ອະນຸມັດໃຫ້ສ້າງຕັ້ງ, ອອກທະບຽນໃບປະກອບວິຊາຊີບ ໃຫ້ບັນດາຫົວໜ່ວຍບໍລິການດ້ານການແພດ ແລະ ການຢາ ຂອງລວມໝູ່, ບຸກຄົນ ທັງຂອງລັດ ແລະ ຂອງເອກະຊົນ ຕາມກົດໝາຍ ແລະ ລະບຽບການ ທີ່ລັດ ແລະ ກະຊວງສາທາລະນະສຸກວາງອອກ;
4. ກວດກາ ແລະ ກວດການວຽກງານຕ່າງໆທີ່ກຳນົດໄວ້ໃນພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບບັນຫາ ທີ່ນອນຢູ່ໃນ ພາລະບົດບາດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ;
6. ຮຽກໂຮມພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ນັກວິຊາການສາທາລະນະສຸກຂັ້ນຕ່າງໆ ມາເຂົ້າຮ່ວມປະຊຸມ ຫຼື ສ່ອງແສງວຽກງານ;
7. ອະນຸມັດໃຫ້ບັນດາກົມ, ສະຖາບັນ, ສູນວິຊາການຕ່າງໆຈັດຊຸດອົບຮົມ ຫຼື ສຳມະນາວິຊາການ ໃນແຕ່ລະໄລຍະ;
8. ສ້າງແຜນລາຍຮັບ ແລະ ລາຍຈ່າຍງົບປະມານການເງິນ ຂອງກະຊວງສາທາລະນະສຸກຕາມແຜນການ ທີ່ລັດຖະບານໄດ້ອະນຸມັດ;
9. ແຕ່ງຕັ້ງ ແລະ ຍຸບເລີກ ຄະນະກຳມະການ, ຄະນະຮັບຜິດຊອບໂຄງການຕ່າງໆ ເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ການມອບໝາຍຂອງກະຊວງ

10.ຕິດຕໍ່ພົວພັນ, ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກກັບຕ່າງປະເທດ ( ອີງການຈັດຕັ້ງສາກົນ, ເອກະຊົນ) ບົນພື້ນຖານທີ່ໄດ້ຮັບອະນຸມັດຈາກລັດຖະບານຢ່າງເປັນທາງການ;

11.ປະຕິບັດສິດອື່ນໆ ຕາມທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

**ກ. ກົງຈັກການຈັດຕັ້ງຂອງກະຊວງສາທາລະນະສຸກ ປະກອບມີ:**

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມແຜນການ ແລະ ການເງິນ;
5. ກົມອະນາໄມ-ກັນພະຍາດ;
6. ກົມປິ່ນປົວ;
7. ກົມອາຫານ ແລະ ຢາ.

ນອກນີ້, ຍັງມີ ບັນດາ ໂຮງໝໍ, ສະຖາບັນ, ສູນ, ສະຖາບັນການສຶກສາ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ ທີ່ຂຶ້ນກັບກະຊວງສາທາລະນະສຸກ.

**ຂ. ກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນ ປະກອບມີ:**

1. ພະແນກສາທາລະນະສຸກ ຂັ້ນແຂວງ.
2. ຫ້ອງການສາທາລະນະສຸກ ຂັ້ນເມືອງ.

**ມາດຕາ 6. ໂຄງປະກອບບຸກຄະລະກອນ**

1. ກະຊວງສາທາລະນະສຸກປະກອບມີ ລັດຖະມົນຕີວ່າການ 01 ທ່ານ ຊຶ່ງ ໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ບົນພື້ນຖານການສະເໜີຂອງນາຍົກລັດຖະມົນຕີ ແລະ ໂດຍໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ, ເປັນຫົວໜ້າກະຊວງ ແລະ ເປັນສະມາຊິກຂອງຄະນະລັດຖະບານ. ມີຄວາມຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ອຳນວຍຄວບຄຸມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ກົດໝາຍຂອງລັດ, ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ.ປ.ປ.ລາວ ແລະ ຕາມດຳລັດສະບັບນີ້; ຮັບຜິດຊອບໂດຍກົງຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງທຸກຢ່າງ ໃນຂະແໜງການຂອງຕົນ; ໃນກໍລະນີຕິດຂັດ ຫລື ໄປເຄື່ອນໄຫວວຽກງານຫ່າງໄກ ລັດຖະມົນຕີວ່າການ ມອບສິດເປັນການຊົ່ວຄາວໃຫ້ລັດຖະມົນຕີຊ່ວຍວ່າການຜູ້ໃດຜູ້ໜຶ່ງວ່າການແທນເປັນລາຍລັກອັກສອນ;

2. ກະຊວງສາທາລະນະສຸກ ຍັງປະກອບມີ ລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ, ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ໂດຍການສະເໜີຂອງຄະນະຈັດຕັ້ງສູນກາງພັກ, ເປັນຜູ້ຊ່ວຍລັດຖະມົນຕີວ່າການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ພ້ອມກັນນັ້ນກໍຮັບຜິດຊອບລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ;
3. ຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າສະຖາບັນ; ຫົວໜ້າ, ຮອງຫົວໜ້າສະຖາບັນການສຶກສາ; ຫົວໜ້າ, ຮອງຫົວໜ້າໂຮງໝໍ; ຫົວໜ້າ, ຮອງຫົວໜ້າພະແນກ; ພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ຈຳນວນໜຶ່ງ ຊຶ່ງບັນຈຸເຂົ້າໃນຕຳແໜ່ງງານຕ່າງໆ.
   - ຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ທຽບເທົ່າ ໄດ້ຮັບການແຕ່ງຕັ້ງ ຈາກທ່ານນາຍົກລັດຖະມົນຕີ ບົນພື້ນຖານການສະເໜີຂອງຄະນະຈັດຕັ້ງສູນກາງພັກ; ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ ແລະ ທຽບເທົ່າລົງມາ ແມ່ນລັດຖະມົນຕີວ່າການເປັນຜູ້ແຕ່ງຕັ້ງ ບົນພື້ນຖານການສະເໜີຂອງຫົວໜ້າ ກົມຈັດຕັ້ງ-ພະນັກງານ.
   - ຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ທຽບເທົ່າ ເປັນຜູ້ຊ່ວຍລັດຖະມົນຕີວ່າການ ເຮັດໜ້າທີ່ຄຸ້ມຄອງມະຫາພາກຕາມວຽກງານວິຊາສະເພາະ, ຮັບຜິດຊອບໂດຍກົງຕໍ່ຜົນສຳເລັດ ແລະ ຜົນເສຍຫາຍຂອງວຽກງານວິຊາສະເພາະຢູ່ກົມແລະສາຍງານຮັບຜິດຊອບ;

## ໝວດທີ IV
## ລະບອບແບບແຜນວິທີການເຮັດວຽກ

### ມາດຕາ 7. ແບບແຜນວິທີເຮັດວຽກ

ກະຊວງສາທາລະນະສຸກ ເຄື່ອນໄຫວວຽກງານ ແລະ ດຳເນີນງານຕາມຫລັກການລວມ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບແລະປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງ ພະນັກງານ-ລັດຖະກອນ ທຸກລະດັບ;
2. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານງານ ແລະ ສົມທົບຢ່າງແໜ້ນແຟ້ນກັບທຸກຂະແໜງການ ທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆຕາມພາລະບົດບາດ, ສິດ, ໜ້າທີ່ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ;
3. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍພ້ອມທັງ ປະຕິບັດລະບອບລາຍງານສອງແສງຢ່າງເຂັ້ມງວດ; ການເຄື່ອນໄຫວວຽກງານ ແມ່ນປະຕິບັດຕາມລະບຽບກົດໝາຍ; ຖື ແລະ ຫັນເອົາຍຸດທະສາດ, ນະໂຍບາຍຂອງພັກ-ລັດຖະບານມາຜັນຂະຫຍາຍໃຫ້ລະອຽດ ເພື່ອເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດ;
4. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3ເດືອນ, 6ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ຂັ້ນເທິງຕົນ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ກະຊວງສາທາລະນະສຸກ ມີງົບປະມານ, ເຄື່ອງໝາຍ ແລະ ກາປະທັບ ເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ບັນດາກົມ, ບັນດາສະຖາບັນ, ໂຮງໝໍ, ສູນ, ສະຖາບັນການສຶກສາ, ຫົວໜ່ວຍວິສາຫະກິດ, ພະແນກສາທາລະນະສຸກ ຂັ້ນແຂວງ, ຫ້ອງການສາທາລະນະສຸກ ຂັ້ນເມືອງ ແລະ ອົງການຈັດຕັ້ງຕ່າງໆ ທີ່ຂຶ້ນກັບກະຊວງສາທາລະນະສຸກ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ກະຊວງສາທາລະນະສຸກ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ປ່ຽນແທນ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 020/ນຍ, ລົງວັນທີ 19 ມີນາ 1999; ບັນດາດຳລັດ, ຂໍ້ຕົກລົງ, ລະບຽບການຕ່າງໆ ທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍຸບເລີກ.

**ນາຍົກລັດຖະມົນຕີ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ບົວສອນ ບຸບຜາວັນ